ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ PWT

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ເລກທີ: 1152 /ຍທຂ

ນະຄອນຫຼວງວຽງຈັນ, ວັນທີ: 6.ພະຈິກ.2019

ຮຽນ : ທ່ານ ເລຂາທິການສະພາແຫ່ງຊາດ ທີ່ນັບຖື.

ເລື່ອງ: ແຈ້ງຕອບຕໍ່ຄໍາສະເໜີຂອງປະຊາຊົນ ທີ່ມີຕໍ່ຂະແໜງການ ຍທຂ ຜ່ານໂທລະສັບສາຍດ່ວນ ໃນໄລຍະດໍາເນີນກອງປະຊຸມສະໄໝສາມັນ ເທື່ອທີ 7 ສະພາແຫ່ງຊາດ ຊຸດທີ VIII.

- ອີງຕາມໜັງສືທາງລັດຖະການ ຂອງສະພາແຫ່ງຊາດຊຸດທີ VIII ເລກທີ 239/ຄລສ, ລົງວັນທີ 17/06/2019 ແລະ ເລກທີ 279/ຄລສ, ລົງວັນທີ 25/06/2019.

ກະຊວງໂຍທາທິການ ແລະ ຂົນສົ່ງ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບ ກ່ຽວກັບການປະສານເອົາຂໍ້ມູນນໍາທຸກພາກສ່ວນທີ່ກ່ຽວຂ້ອງທັງສູນກາງ ແລະທ້ອງຖິ່ນ ເພື່ອຕອບຄໍາສະເໜີຂອງປະຊາຊົນ ທີ່ມີຕໍ່ຂະແໜງການ ຍທຂ ຜ່ານໂທລະສັບສາຍດ່ວນ 156 ຂອງສະພາແຫ່ງຊາດ ມີລາຍລະອຽດລຸ່ມນີ້:

1. ປະຊາຊົນບ້ານ ຈີນ, ເມືອງ ໄຊ, ແຂວງອຸດົມໄຊ ສະເໜີກ່ຽວກັບການຝາກເຄື່ອງນໍາລົດເມ ຫຼື ລົດໂດຍສານສາຍຕ່າງໆ ແມ່ນມີລາຄາແພງເກີນໄປ. ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງຄົ້ນຄ້ວາ ແລະ ກໍານົດລາຄາຝາກເຄື່ອງນໍາລົດເມສາຍຕ່າງໆ ໃນຂອບເຂດທົ່ວປະເທດ, ເພື່ອບໍ່ໃຫ້ມີຊ່ອງຫວ່າງໃຫ້ຜູ້ປະກອບກິດຈະການລົດໂດຍສານເອົາປຽບປະຊາຊົນ.ສະເໜີພາກສ່ວນທີ່ກ່ຽວຂ້ອງຄົ້ນຄ້ວາ ແລະ ແກ້ໄຂບັນຫານີ້ດ້ວຍ.

➢ ຕອບ: ອີງໃສ່ກົດໝາຍ ແລະ ກົດລະບຽບວ່າດ້ວຍການຂົນສົ່ງທາງບົກ ແມ່ນຍັງບໍ່ທັນມີລະບຽບກ່ຽວກັບການກໍານົດຄ່າຝາກເຄື່ອງນໍາລົດຂົນສົ່ງໂດຍສານ ຈຶ່ງເປັນຊ່ອງຫວ່າງເຮັດໃຫ້ຜູ້ປະກອບການກໍານົດລາຄາຄ່າຝາກເຄື່ອງດ້ວຍຕົນເອງ ຊຶ່ງພາກລັດຍັງບໍ່ທັນໄດ້ຄຸ້ມຄອງ. ເພື່ອແກ້ໄຂບັນຫາດັ່ງກ່າວ ປະຈຸບັນກະຊວງ ຍທຂ ພວມສົມທົບກັບພາກສ່ວນກ່ຽວຂ້ອງດໍາເນີນການຄົ້ນຄ້ວາກໍານົດລາຄາຫົວໜ່ວຍຄ່າຂົນສົ່ງລົດໂດຍສານ ແລະ ຂົນສົ່ງສິນຄ້າທາງບົກລວມທັງກໍານົດຄ່າຝາກເຄື່ອງ ຕາມໄລຍະທາງ, ຂະໜາດ ແລະ ນໍ້າໜັກຂອງເຄື່ອງ ພາຍຫລັງສໍາເລັດໄດ້ຖືກຮັບຮອງປະກາດໃຊ້ແລ້ວຈະເປັນນິຕິກໍາບ່ອນອີງໃນການຄຸ້ມຄອງ, ຕິດຕາມ, ກວດກາການດໍາເນີນທຸລະກິດການຂົນສົ່ງ ໃຫ້ແທດເໝາະ, ສອດຄ່ອງກັບກົນໄກເສດຖະກິດຕະຫລາດໃນແຕ່ລະໄລຍະ.

2. ປະຊາຊົນບ້ານ ບໍ່ເຕັນ, ເມືອງຫຼວງນໍ້າທາ, ແຂວງຫຼວງນໍ້າທາ ສະເໜີກ່ຽວກັບປະຊາຊົນ 16 ຄອບຄົວ ຍັງບໍ່ທັນໄດ້ຮັບຄ່າຊົດເຊີຍ ຈາກຜົນກະທົບຂອງໂຄງການເສັ້ນທາງລົດໄຟ ລາວ -ຈີນ ຊຶ່ງປະຊາຊົນໄດ້ເປີດບັນຊີນໍາທະນາຄານຕາມຄໍາແນະນໍາແລ້ວ ແຕ່ຍັງບໍ່ໂອນເງິນໃຫ້ເທື່ອ. ດັ່ງນັ້ນ, ຈຶ່ງສະເໜີຫາພາກສ່ວນກ່ຽວຂ້ອງ (ຄະນະຮັບຜິດຊອບໂຄງການກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ) ພິຈາລະນາ ແລະ ແກ້ໄຂດ້ວຍ.

➢ ຕອບ: ເພື່ອປະຕິບັດຕາມການກໍານົດລາຄາຫົວໜ່ວຍເບີກຈ່າຍຄ່າຊົດເຊີຍສິ່ງກີດຂວາງ ຂອງແຕ່ລະແຂວງ ແລະ ນະຄອນຫຼວງວຽງຈັນທີ່ໄດ້ຮັບການຮັບຮອງຈາກສະພາປະຊາຊົນທ້ອງຖິ່ນແລ້ວ, ລັດຖະມົນຕີກະຊວງ ຍທຂ,

ຫົວໜ້າຄະນະຊີ້ນຳໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ໄດ້ອອກຂໍ້ຕົກລົງອະນຸມັດຄູ່ມືແນະນຳການເບີກຈ່າຍຄ່າຊົດເຊີຍສິ່ງກີດຂວາງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ສະບັບເລກທີ 12501/ຍທຂ, ລົງວັນທີ 11 ມິຖຸນາ 2018 ເພື່ອເປົ້າໝາຍນຳໃຊ້ກັບບຸກຄົນ ແລະ ການຈັດຕັ້ງ ດັ່ງນີ້:

(1) ປະຊາຊົນທີ່ເປັນເຈົ້າຂອງຊັບສິນ ທີ່ຖືກຜົນກະທົບຈາກໂຄງການທາງລົດໄຟລາວ-ຈີນ.

(2) ລວມໝູ່ທີ່ເປັນເຈົ້າຂອງຊັບສິນ ຊຶ່ງຖືກຜົນກະທົບຈາກໂຄງການທາງລົດໄຟລາວ-ຈີນ.

(3) ນິຕິບຸກຄົນທີ່ເປັນເຈົ້າຂອງຊັບສິນ ຊຶ່ງຖືກຜົນກະທົບຈາກໂຄງການທາງລົດໄຟລາວ-ຈີນ.

(4) ອົງການຈັດຕັ້ງຂອງລັດ ທີ່ເປັນເຈົ້າຂອງຊັບສິນ ຊຶ່ງຖືກຜົນກະທົບຈາກໂຄງການທາງລົດໄຟລາວ-ຈີນ.

ກົນໄກ ແລະ ຂັ້ນຕອນການເບີກຈ່າຍຕາມທີ່ລະບຸໄວ້ໃນຄູ່ມືແນະນຳສະບັບນີ້ຄື: ທີມງານຈາກບໍລິສັດທາງລົດໄຟລາວ-ຈີນ (ໃນນາມຜູ້ສຳປະທານໂຄງການ) ສົມທົບກັບຄະນະຄຸ້ມຄອງໂຄງການ, ຄະນະໄກ່ເກ່ຍຊົດເຊີຍຂອງແຂວງ ແລະ ເມືອງ, ນາຍບ້ານ, ຜູ້ທີ່ຖືກຜົນກະທົບ, ຜູ້ຮັບເໝົາກໍ່ສ້າງ ແລະ ທີ່ປຶກສາໂຄງການ ໄດ້ພ້ອມກັນລົງສຳຫຼວດພື້ນທີ່ ທີ່ຖືກກະທົບຕໍ່ການກໍ່ສ້າງທາງລົດໄຟລາວ-ຈີນຕົວຈິງ ແລ້ວສັງລວມເປັນບັນຊີແຕ່ລະປະເພດທີ່ຖືກຜົນກະທົບ ເພື່ອຄິດໄລ່ຕາມລາຄາຫົວໜ່ວຍຊົດເຊີຍ ທີ່ທ່ານເຈົ້າແຂວງອະນຸມັດ ລວມທັງໝົດເປັນມູນຄ່າທີ່ຈະຕ້ອງໄດ້ຊົດເຊີຍຂອງແຕ່ລະຄົນ ຫຼັງຈາກນັ້ນຈຶ່ງໄດ້ລົງລາຍເຊັນຢັ້ງຢືນຮ່ວມກັນ ທັງໝົດມີ 7 ຝ່າຍຄື: ຜູ້ກ່ຽວທີ່ຖືກຜົນກະທົບ, ນາຍບ້ານ, ເຈົ້າເມືອງ, ຜູ້ຮັບເໝົາກໍ່ສ້າງ, ບໍລິສັດທີ່ປຶກສາ ແລະ ບໍລິສັດທາງລົດໄຟລາວ-ຈີນ, ຄະນະກຳມະການໄກ່ເກ່ຍ ຂັ້ນແຂວງ, ພາຍຫຼັງສຳເລັດ 7 ລາຍເຊັນແລ້ວແມ່ນໄດ້ສັງລວມເປັນໃບສະເໜີໃຫ້ທ່ານເຈົ້າແຂວງ ຫຼື ເຈົ້າຄອງນະຄອນຫລວງ ລົງລາຍເຊັນຮັບຮອງມູນຄ່າລວມທັງໝົດຂອງແຂວງ/ນະຄອນຫຼວງ ເພື່ອນຳສະເໜີຫາທ່ານ ລັດຖະມົນຕີກະຊວງ ຍທຂ ອະນຸມັດໂອນເງິນເປັນແຕ່ລະງວດທີ່ມີເອກະສານຖືກຕ້ອງຄົບຖ້ວນຕາມທີ່ກຳນົດໃນຄູ່ມື ຈຶ່ງໂອນເງິນຄ່າຊົດເຊີຍດັ່ງກ່າວໄປຫາຄະນະກຳມະການໄກ່ເກ່ຍຂັ້ນແຂວງ/ນະຄອນຫລວງເປັນຜູ້ຈັດຕັ້ງການເບີກຈ່າຍໃຫ້ຜູ້ຖືກຜົນກະທົບ ໂດຍຜ່ານທະນາຄານທຸລະກິດ.

ມາຮອດປັດຈຸບັນນີ້, ວຽກງານການຊົດເຊີຍໄດ້ດຳເນີນການມາທັງໝົດແລ້ວຈຳນວນ 5 ງວດ, ມູນຄ່າຊົດເຊີຍທັງໝົດ 507,92 ຕື້ກີບ, ນອກຈາກນັ້ນຍັງໄດ້ຈ່າຍຄ່າແກ້ໄຂຜົນກະທົບບໍ່ໄດ້ທຳການຜະລິດເຂົ້ານາໃນປີ 2017 ແລະ 2018 ມູນຄ່າ 3,97 ຕື້ກີບ ແລະ ປະຈຸບັນພວມດຳເນີນການປະກອບເອກະສານຈ່າຍຄ່າຊົດເຊີຍ ງວດ 6 ລວມມູນຄ່າປະມານ 106 ຕື້ກີບ ຕາມບົດລາຍງານສະບັບເລກທີ 941/ຍທຂ, ລົງວັນທີ 12 ກັນຍາ 2019. ຊຶ່ງການຊົດເຊີຍໃນໄລຍະຜ່ານມາ ແມ່ນໄດ້ເລັ່ງໃສ່ເຂດບ້ານເຮືອນປະຊາຊົນ ທີ່ຍັງບໍ່ທັນສາມາດມອບພື້ນທີ່ໃຫ້ແກ່ການກໍ່ສ້າງໄດ້. ຖ້າປະຊາຊົນທ່ານໃດສົນໃຈໃນລາຍລະອຽດ ສະເໜີໃຫ້ເຂົ້າໄປພົບກັບຄະນະກຳມະການໄກ່ເກ່ຍຂອງແຂວງ ຫລື ນະຄອນຫລວງວຽງຈັນ ຕາມທີ່ສິ່ງກີດຂວາງຂອງໂຄງການທາງລົດໄຟລາວ-ຈີນ ຕັ້ງຢູ່.

ສຳລັບປະຊາຊົນບ້ານ ບໍ່ເຕັນ, ເມືອງ ຫຼວງນ້ຳທາ, ແຂວງ ຫຼວງນ້ຳທາ ຈຳນວນ 16 ຄອບຄົວ ທີ່ຍັງບໍ່ໄດ້ຮັບການຊົດເຊີຍ ຍ້ອນວ່າດິນ ແລະ ເຮືອນ ຂອງປະຊາຊົນແມ່ນບໍ່ໄດ້ຮັບຜົນກະທົບຈາກການກໍ່ສ້າງທາງລົດໄຟ,ໝາຍຄວາມວ່າ: ດິນ ແລະ ເຮືອນດັ່ງກ່າວ ຢູ່ນອກຂອບເຂດສະຫງວນຂອງເສັ້ນທາງລົດ (ເສັ້ນແລວແດງ), ສະນັ້ນ ຈຶ່ງບໍ່ສາມາດຊົດເຊີຍໄດ້ ແລະ ຜ່ານມາຄະນະກຳມະການໄກ່ເກ່ຍຂອງແຂວງ ກໍ່ໄດ້ລົງໄປລຸລ່ວງນຳພວກກ່ຽວ ໃຫ້ເຂົ້າໃຈແລ້ວ.

3. <u>ປະຊາຊົນເມືອງ ໄຊ, ແຂວງ ອຸດົມໄຊ ສະເໜີບັນຫາເງິນຊົດເຊີຍຜົນກະທົບຈາກໂຄງການກໍ່ສ້າງເສັ້ນທາງລົດໄຟລາວ-ຈີນ ທີ່ຖືກດິນນາຂອງປະຊາຊົນຫຼາຍ 1000 ເຮັກຕາ ລໍຖ້າເງິນຊົດເຊີຍມາໄດ້ ປີ 1 ແລ້ວແຕ່ຍັງບໍ່ທັນໄດ້ຮັບຄ່າຊົດເຊີຍເທື່ອ. ປັດຈຸບັນປະຊາຊົນເດືອດຮ້ອນ ບາງຄອບຄົວອາໃສແຕ່ເຮັດນາກໍ່ບໍ່ມີນາເຮັດ. ສະເໜີມາຍັງພາກສ່ວນທີ່ກ່ຽວຂ້ອງແກ້ໄຂດ້ວຍ.</u>

➢ <u>ຕອບ:</u> ຄຳຕອບຄືກັບຂໍ້ 2.

4. <u>ປະຊາຊົນບ້ານ ນາເຕີຍ, ເມືອງ ຫຼວງນ້ຳທາ ສະເໜີໃຫ້ລັດຖະບານຄົ້ນຄ້ວາຈັດສັນທີ່ດິນໃຫ້ປະຊາຊົນ ຈຳນວນ 184 ຄອບຄົວທີ່ຖືກຜົນກະທົບຈາກໂຄງການກໍ່ສ້າງເສັ້ນທາງລົດໄຟລາວ-ຈີນ. ສະເໜີມາຍັງພາກສ່ວນກ່ຽວຂ້ອງແກ້ໄຂດ້ວຍ.</u>

- ຕອບ: ຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ໄດ້ສົມທົບກັບອົງການປົກຄອງທ້ອງຖິ່ນ ໄດ້ແຈ້ງໃຫ້ປະຊາຊົນຮັບຊາບແລ້ວ ຈະໃຫ້ຍົກຍ້າຍໄປຢູ່ເຮືອນໃນບ້ານຈັດສັນ ຢູ່ບ້ານນາເຕີຍ ເມືອງນໍ້າທາ ແຂວງຫຼວງນໍ້າທາ ມີ 7 ບ້ານ 159 ຫຼັງຄາເຮືອນ, ລາຍລະອຽດຄືດັ່ງຄໍາຕອບໃນຂໍ້ 8.

5. ປະຊາຊົນບ້ານ ດ່ານຊ້າງ, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ ສະເໜີບັນຫາການກໍ່ສ້າງເສັ້ນທາງແຕ່ບ້ານຕານມີໄຊ ຫາບ້ານໜອງບຶກ ເຫັນວ່າດໍາເນີນມາໄດ້ຫຼາຍປີແລ້ວ ມາເຖິງປັດຈຸບັນຍັງບໍ່ເຫັນຄວາມຄືບໜ້າ. ສະເໜີມາຍັງພາກສ່ວນທີ່ກ່ຽວຂ້ອງແກ້ໄຂດ້ວຍ.

- ຕອບ: ອີງຕາມການລາຍງານຂອງ ພະແນກ ຍທຂ ນະຄອນຫລວງວຽງຈັນ ໃຫ້ຊາບວ່າ: ໂຄງການກໍ່ສ້າງທາງເບຕົງເສີມເຫຼັກ ແຕ່ ສີ່ແຍກໄຟແດງຕານມີໄຊ ຫາ ສາມແຍກສີເກີດ ລວມໄລຍະທາງທັງໝົດ 9,37 ກມ. ໂຄງການກໍ່ສ້າງທາງດັ່ງກ່າວ ມີມູນຄ່າກໍ່ສ້າງທັງໝົດ 45.110.661,57 USD (ສີ່ສິບຫ້າລ້ານ ໜຶ່ງແສນສິບພັນ ຫົກຮ້ອຍຫົກສິບເອັດ ຈຸດຫ້າສິບເຈັດ ໂດລາສະຫະລັດ) ເຊິ່ງແມ່ນກຸ່ມບໍລິສັດ ຕັ່ງຈະເລີນ ຈໍາກັດ ເປັນຜູ້ລົງທຶນກໍ່ສ້າງກ່ອນ 100%, ໄລຍະເວລາການກໍ່ສ້າງທັງໝົດ 24 ເດືອນ ເລີ່ມແຕ່ວັນທີ 01/10/2016 ເຖິງວັນທີ 30/9/2018 ແລະ ໄດ້ຕໍ່ສັນຍາກໍ່ສ້າງອີກ 9 ເດືອນ. ຄວາມຄືບໜ້າການກໍ່ສ້າງມາຮອດ ເດືອນ ກັນຍາ 2019 ປະຕິບັດໄດ້ສະເລ່ຍ 74,8 % ຂອງໜ້າວຽກທັງໝົດ, ຕາມການລາຍງານຂອງພະແນກ ຍທຂ ນະຄອນຫລວງວຽງຈັນ ຜູ້ຮັບເໝົາກໍ່ສ້າງ ຈະໃຫ້ສໍາເລັດການກໍ່ສ້າງໜ້າທາງເບຕົງ 100% ໃນທ້າຍປີ 2019.

6. ປະຊາຊົນບ້ານ ພະຂາວ, ເມືອງໄຊທານີ, ນະຄອນຫຼວງວຽງຈັນສະເໜີບັນຫາການປຸກສ້າງຮ້ານຄ້າ-ຂາຍ ຂອງປະຊາຊົນ, ພໍ່ຄ້າ, ຊາວຂາຍມີຫຼາຍຮ້ານທີ່ເຮັດເທີບອອກມາກວມເອົາທາງຍ່າງ ຊຶ່ງບໍ່ຖືກຕ້ອງຕາມແຜນຜັງເມືອງທີ່ໄດ້ອະນຸຍາດໃຫ້ການກໍ່ສ້າງ. ສະນັ້ນ, ຈຶ່ງສະເໜີພາກສ່ວນທີ່ກ່ຽວຂ້ອງແກ້ໄຂ ເພື່ອຄວາມສະດວກໃນການສັນຈອນທາງຍ່າງ ແລະ ຄວາມເປັນລະບຽບຮຽບຮ້ອຍ.

- ຕອບ: ອີງຕາມການລາຍງານຂອງ ພະແນກ ຍທຂ ນະຄອນຫລວງວຽງຈັນ ໃຫ້ຊາບວ່າ:

  1). ການອະນຸຍາດປຸກສ້າງ, ການຖົມດິນ ຂຸດດິນຕ່າງໆ ໃນນະຄອນຫຼວງວຽງຈັນ ໃນປະຈຸບັນແມ່ນໄດ້ອີງໃສ່ນິຕິກໍາ ດັ່ງນີ້ : ກົດໝາຍວ່າດ້ວຍການຜັງເມືອງ ( ສະບັບປຸງ ) ສະບັບເລກທີ 40/ສພຊ, ລົງວັນທີ 16/11/2017; ຂໍ້ຕົກລົງຂອງທ່ານລັດຖະມົນຕີກະຊວງ ໂຍທາທິການ ແລະ ຂົນສົ່ງ ວ່າດ້ວຍການຄຸ້ມຄອງການປຸກສ້າງ ( ສະບັບປັບປຸງໃໝ່ ) ເລກທີ 2241/ຍທຂ, ລົງວັນທີ 31/01/2019; ຂໍ້ຕົກລົງຂອງທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍ ການຈັດສັນຄວາມບໍ່ເປັນລະບຽບຮຽບຮ້ອຍໃນຕົວເມືອງ ແລະ ຊານເມືອງ ເລກທີ 1184/ຈນວ, ລົງວັນທີ 20/12/2017; ຂໍ້ແນະນໍາເພີ່ມເຕີມຂອງກົມເຄຫາ ແລະ ຜັງເມືອງ ກະຊວງ ໂຍທາທິການ ແລະ ຂົນສົ່ງ ປີ 2005; ຂໍ້ກໍານົດບົດແນະນໍາທາງດ້ານເຕັກນິກ ກ່ຽວກັບ ເຕັກນິກການຂຸດດິນ ຫຼື ຖົມດິນຂອງກົມເຄຫາ ແລະ ຜັງເມືອງ, ກະຊວງ ໂຍທາທິການ ແລະ ຂົນສົ່ງ ປີ 2013.

  2). ມາດຕະການທີ່ເດັດຂາດໃນການແກ້ໄຂ ຕໍ່ພາກສ່ວນຜູ້ລະເມີດ ກ່ຽວກັບບັນຫາການປຸກສ້າງ, ການຂຸດດິນຖົມດິນ ແລະ ການບຸກລຸກເຂດສະຫງວນຕ່າງໆ ແລະເຂດສະຫງວນທາງ ມີມາດຕະການດັ່ງນີ້: ນັບແຕ່ເດືອນ 05 ປີ 2017 ເປັນຕົ້ນມາ ພະແນກ ໂຍທາທິການ ແລະຂົນສົ່ງ ນະຄອນຫຼວງວຽງຈັນ ໄດ້ສ້າງຕັ້ງໜ່ວຍງານຕິດຕາມ, ກວດກາຜັງເມືອງ ( ໃນຕໍ່ໜ້າຈະສ້າງເປັນເຈົ້າໜ້າທີ່ຜັງເມືອງຕາມກົດໝາຍວ່າດ້ວຍການຜັງເມືອງ ສະບັບປັບປຸງກໍານົດ ) ເຊິ່ງໜ່ວຍງານດັ່ງກ່າວມີໜ້າທີ່ ລົງປະສານສົມທົບກັບບັນດາ ຫ້ອງການໂຍທາທິການ ແລະ ຂົນສົ່ງປະຈໍາເມືອງ 9 ຕົວເມືອງ, ອໍານາດການປົກຄອງບ້ານ ແລະ ພາກສວນທີ່ກ່ຽວຂ້ອງກ່ຽວຂ້ອງ ຢ່າງເປັນປະຈໍາເພື່ອລົງຕິດຕາມ, ກວດກາການປຸກສ້າງ, ການຕໍ່ເທີບ - ເງີບ ແລະ ການຂຸດດິນ-ຖົມດິນ ທີ່ບໍ່ຖືກຕ້ອງຕາມລະບຽບຄຸ້ມຄອງຜັງເມືອງ, ລົງຈັດສັນເຮັດບົດບັນທຶກກ່າວເຕືອນ, ປັບໃໝ ແລະປະຕິບັດມາດຕະການຢ່າງເດັດຂາດ, ການບຸກລຸກເຂດສະຫງວນທາງ ແລະ ເຂດສະຫງວນຕ່າງໆ ຕ້ອງໄດ້ແກ້ໄຂບັນຫາການອອກໃບຕາດິນກວມເອົາເຂດສະຫງວນຂອງທາງ ແລະ ເຂດສະຫງວນຕ່າງໆ ທີ່ບໍ່ສອດສ່ອງຕາມແຜນຜັງເມືອງກໍານົດ; ຈະໄດ້ປັບປຸງລະບຽບການໃນການຄຸ້ມຄອງການຂຸດດິນ-ຖົມດິນໃຫ້ມີຄວາມຈະແຈ້ງ, ຊັດເຈນ, ຮັດກຸມ ແລະ ມີມາດຕະການທີ່ເຂັ້ມງວດເດັດຂາດກວ່າເກົ່າ ຕໍ່ພາກສ່ວນທີ່ລະເມີດລະບຽບການຄຸ້ມຄອງ.

7. ປະຊາຊົນບ້ານ ຖິ່ນ, ເມືອງ ໄຊ, ແຂວງ ອຸດົມໄຊ ສະເໜີບັນຫາເງິນຊົດເຊີຍຜົນກະທົບຈາກໂຄງການກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ ທີ່ຖືກດິນນາ ແລະ ທີ່ດິນປຸກສ້າງ ຂອງປະຊາຊົນບ້ານຖິ່ນ, ເມືອງໄຊ ແຂວງ ອຸດົມໄຊ ຍັງບໍ່

ທັນໄດ້ຮັບຊົດເຊີຍເທື່ອ. ໃນທ້າຍປີ 2018 ປະຊາຊົນໄດ້ເຊັນເອກະສານຮັບເອົາເງິນ ຢູ່ຫ້ອງການບ້ານ ແຕ່ບໍ່ໄດ້ຮັບເງິນຊົດເຊີຍ. ດັ່ງນັ້ນ, ຈຶ່ງສະເໜີພາກສ່ວນທີ່ກ່ຽວຂ້ອງລົງຕິດຕາມ, ກວດກາ ແລະ ແກ້ໄຂດ້ວຍ.

➢ ຕອບ: ຄຳຕອບຄືກັບຂໍ້ 2.

8. ປະຊາຊົນບ້ານນາເຕີຍ, ເມືອງ ຫຼວງນ້ຳທາ, ແຂວງ ຫຼວງນ້ຳທາ ສະເໜີບັນຫາທີ່ປະຊາຊົນຖືກຜົນກະທົບຈາກໂຄງການກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ ໃນເບື້ອງຕົ້ນໂຄງການຈະຊົດເຊີຍຕໍ່ຜູ້ທີ່ຖືກຜົນກະທົບດ້ວຍເງິນ. ແຕ່ໄລຍະຕໍ່ມາທາງໂຄງການວ່າຈະຊົດເຊີຍດ້ວຍການປຸກເຮືອນ ແລະ ຈັດສັນດິນໃຫ້. ມາຮອດປັດຈຸບັນເຮືອນ ແລະ ທີ່ດິນກໍ່ຍັງບໍ່ທັນໄດ້ຮັບ, ເຮັດໃຫ້ປະຊາຊົນມີຄວາມເດືອດຮ້ອນຫຼາຍ. ຊຶ່ງຕາມຈິດໃຈຂອງປະຊາຊົນແລ້ວແມ່ນຢາກໄດ້ການຊົດເຊີຍດ້ວຍເງິນ. ດັ່ງນັ້ນ, ຈຶ່ງສະເໜີມາຍັງພາກສ່ວນທີ່ກ່ຽວຂ້ອງພິຈາລະນາ ແລະ ແກ້ໄຂດ້ວຍ.

➢ ຕອບ: ຄະນະຄຸ້ມຄອງໂຄງການກໍ່ສ້າງທາງລົດໄຟລາວ-ຈີນ ໄດ້ສົມທົບກັບອົງການປົກຄອງທ້ອງຖິ່ນກຳນົດເອົາ 4 ຈຸດ ລວມຄື: ບ້ານນາເຕີຍ ເມືອງນ້ຳທາ ແຂວງຫຼວງນ້ຳທາ ມີ 7 ບ້ານ 159 ຫຼັງຄາເຮືອນ, ແມ່ນບໍລິສັດລົດໄຟລາວ-ຈີນ ຈະປຸກສ້າງເຮືອນຢູ່ໃນການບ້ານຈັດສັນໃໝ່ ໂດຍແມ່ນການຊ່ວຍເຫຼືອລ້າຂອງລັດຖະບານຈີນ ບ້ວງເງິນ 250 ລ້ານຢວນ ລາຍລະອຽດດັ່ງນີ້: ຈຸດກໍ່ສ້າງບ້ານຈັດສັນຕັ້ງຢູ່ຂອບເຂດບ້ານນາເຕີຍເມືອງນ້ຳທາແຂວງຫຼວງນ້ຳທາ. ເນື້ອທີ່ 19.6 ຮຕ, ຈະກໍ່ສ້າງເຮືອນຈຳນວນ 159 ຫຼັງ, ໃນນັ້ນເຮືອນຂະໜາດນ້ອຍ (6ມ x 10ມ) 38 ຫຼັງ, ຂະໜາດກາງ (8ມ x 11ມ) 45 ຫຼັງ, ຂະໜາດໃຫຍ່ (9ມ x 14ມ) 76 ຫຼັງ, ຕິດຕັ້ງຈານຮັບໂທລະທັດດິຈິຕໍໃຫ້ແຕ່ລະຫຼັງຄາເຮືອນ; ສິ່ງອຳນວຍຄວາມສະດວກ ແລະ ພື້ນຖານໂຄງລ່າງຕ່າງໆ ຄື: ກໍ່ສ້າງຫ້ອງການບ້ານ, ໂຮງຮຽນອະນຸບານ, ໂຮງຮຽນປະຖົມ, ສຸກສາລາ, ສວນສາທາລະນະ ແລະ ອຸປະກອນອອກກຳລັງກາຍ, ບ່ອນຖິ້ມຂີ້ເຫຍື້ອ, ຫ້ອງນ້ຳສາທາລະນະ ແລະ ອື່ນໆ; ວຽກກໍ່ສ້າງພື້ນຖານໂຄງລ່າງລວມມີ: ວຽກປັບໜ້າດິນ, ກໍ່ສ້າງເສັ້ນທາງພາຍໃນບ້ານ 2.86 ກິໂລ, ເສັ້ນທາງເຊື່ອມຈອດກັບພາຍນອກ 2.75 ກິໂລແມັດ, ໄຟຟ້າ, ລະບົບລະບາຍນ້ຳປາປາ ແລະ ຂົວຂະໜາດນ້ອຍ. ປະຈຸບັນວຽກງານຈັດສັນດັ່ງກ່າວກຳລັງດຳເນີນການຢູ່, ຝ່າຍ ສປ ຈີນກຳລັງສ້າງເອກະສານໂຄງການ, ກະກຽມປະມູນ ຄາດວ່າຈະໄດ້ລົງມືກໍ່ສ້າງຕົວຈິງໃນຕົ້ນປີ 2020 ນີ້.

9. ປະຊາຊົນບ້ານ ນາມອນ, ເມືອງ ນາໝໍ້, ແຂວງອຸດົມໄຊ ສະເໜີບັນຫາຝາຍຊົນລະປະທານເຂດບ້ານ ນາມອນ, ເມືອງນ້ຳໝໍ້, ແຂວງອຸດົມໄຊ ສະເໜີບັນຫາຝາຍຊົນລະປະທານເຂດບ້ານນາມອນ, ເມືອງນ້ຳໝໍ້, ແຂວງ ອຸດົມໄຊ ຖືກບໍລິສັດທີ່ເຮັດໂຄງການກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ ໄດ້ນຳໃຊ້ພື້ນທີ່ດິນເຂດນັ້ນໃນການຂຸດດິນເພື່ອກໍ່ສ້າງເຮັດໃຫ້ຝາຍນ້ຳໄດ້ຮັບການເປ່ເພ ແລະ ບໍ່ໄດ້ຮັບການສ້ອມແປງຄືນ. ຝາຍດັ່ງກ່າວປະຊາຊົນນຳໃຊ້ເຂົ້າໃນການຜະລິດກະສິກຳ ເປັນຕົ້ນແມ່ນການປູກເຂົ້າ ຊຶ່ງສົ່ງຜົນກະທົບຕໍ່ເນື້ອທີ່ດິນທັງໝົດ 27 ເຮັກຕາ ແລະ 18 ຄອບຄົວ. ປັດຈຸບັນ ລະດູການປູກເຂົ້າໃກ້ຈະມາຮອດແລ້ວ ປະຊາຊົນຫຼາຍຄອບຄົວຄວນວ່ານກ້າແລ້ວ ແຕ່ຍັງບໍ່ທັນສາມາດເຮັດນາໄດ້. ດັ່ງນັ້ນ, ຈຶ່ງສະເໜີມາຍັງພາກສ່ວນທີ່ກ່ຽວຂ້ອງລົງຕິດຕາມ, ກວດກາ, ຊຸກຍູ້ ແລະ ແກ້ໄຂດ້ວຍ. ບໍ່ດັ່ງນັ້ນປະຊາຊົນຈະບໍ່ໄດ້ເຮັດນາ ແລະ ຈະອຶດເຂົ້າໃນປີຕໍ່ໄປ.

➢ ຕອບ: ມາຮອດວັນທີ 03/07/2019 ຝາຍຊົນລະປະທານເຂດບ້ານ ນາມອນ, ເມືອງນາໝໍ້, ແຂວງອຸດົມໄຊ ໄດ້ຮັບການສ້ອມແປງສຳເລັດ 100%. ປະຈຸບັນນີ້ ແມ່ນໄດ້ດຳເນີນການຜະລິດ ຢ່າງເປັນປົກກະຕິແລ້ວ. ສຳລັບຄ່າຊົດເຊີຍຄ່າເຂົ້າກິນໃຫ້ປະຊາຊົນທີ່ບໍ່ໄດ້ທຳການຜະລິດເຂົ້ານາທີ່ຖືກຜົນກະທົບຕາມແລວທາງລົດໄຟລາວ-ຈີນ ກໍ່ໄດ້ຈ່າຍແກ້ໄຂແລ້ວ ຄື: ປີ 2017 ຈຳນວນ 1,73 ຕື້ກີບ ແລະ ປີ 2018 ຈຳນວນ 2,24 ຕື້ກີບ ລວມທັງໝົດ 3,97 ຕື້ກີບ.

10. ປະຊາຊົນບ້ານທ່າລາດ, ເມືອງ ແກ້ວອຸດົມ, ແຂວງ ວຽງຈັນ ສະເໜີໃຫ້ມີລົດເມໂດຍສານຂອງລັດປະຈຳທາງສາຍວຽງຈັນ-ທ່າລາດຫຼາຍຂຶ້ນຕື່ມ. ເພາະປະຈຸບັນມີແຕ່ລົດຕູ້ໂດຍສານທີ່ເປັນຂອງເອກະຊົນ ແລະ ບຸກຄົນ ຖ້າຜູ້ໂດຍສານໜ້ອຍຈະບໍ່ແລ່ນ ແລະ ບໍ່ອອກຕາມເວລາ. ດັ່ງນັ້ນ, ຈຶ່ງສະເໜີມາຍັງພາກສ່ວນທີ່ກ່ຽວຂ້ອງພິຈາລະນາ ແລະ ແກ້ໄຂດ້ວຍ.

➢ ຕອບ: ຜ່ານມາໃນໄລຍະແຕ່ເດືອນ ມັງກອນ ຫາເດືອນ ມີນາ 2014 ການແລ່ນລົດໂດຍສານສາຍທາງນະຄອນຫລວງວຽງຈັນ-ທ່າລາດ ແມ່ນມີລົດເມຂອງລັດວິສາຫະກິດລົດເມນະຄອນຫລວງ ແລ່ນຮ່ວມກັນກັບລົດສະມາຄົມຂົນສົ່ງໂດຍສານແຂວງວຽງຈັນ ໂດຍເຂົ້າມາຈອດຮັບ-ສົ່ງຜູ້ໂດຍສານຢູ່ຄິວລົດເມຕະຫລາດຂົວດິນ. ແຕ່ພາຍຫລັງເດືອນ ເມສາ 2014 ນະຄອນຫລວງວຽງຈັນ ໄດ້ຈັດສັນຄວາມເປັນລະບຽບຮຽບຮ້ອຍເພື່ອແກ້ໄຂ

ຄວາມແອອັດຢູ່ 4 ຕົວເມືອງໃນຂອງນະຄອນຫລວງວຽງຈັນ ຈຶ່ງໄດ້ຍົກຍ້າຍຄິວລົດສາຍທາງດັ່ງກ່າວອອກຈາກສະຖານີຕະຫລາດຂົວດິນ ໃຫ້ໄປອອກຢູ່ສະຖານີລົດໂດຍສານບ້ານດົງນາທອງ, ຈຶ່ງເຫັນວ່າມີຜູ້ໂດຍສານບໍ່ຫລາຍ ລັດວິສາຫະກິດລົດເມນະຄອນຫລວງ ຈຶ່ງໄດ້ຢຸດການແລ່ນລົດຂອງຕົນ ນັບແຕ່ນັ້ນມາ. ປະຈຸບັນມີລົດຕູ້, ລົດສອງແຖວ ແລະລົດໂດຍສານຂອງສະມາຄົມຂົນສົ່ງແຂວງວຽງຈັນແລ່ນບໍລິການຕາມສາຍທາງດັ່ງກ່າວ ແຕ່ລະມື້ມີປະມານ 10 ຖ້ຽວຂຶ້ນໄປ ເລີ່ມແຕ່ 6:00ມເຊົ້າ-ເຖິງ 6:00ມ ແລງ, ໃນລາຄາ 25.000ກີບ ຕໍ່ຄົນ. ປະຈຸບັນລັດວິສາຫະກິດລົດເມນະຄອນຫລວງວຽງຈັນ ພວມສຶກສາຄວາມເປັນໄປໄດ້ໃນການເປີດສາຍທາງດັ່ງກ່າວຄືນໃໝ່ ເພື່ອຮັບໃຊ້ສັງຄົມໃຫ້ທົ່ວເຖິງ, ແຕ່ເຖິງຢ່າງໃດກໍ່ຕາມການບໍລິການແລ່ນລົດກໍ່ຕ້ອງໃຫ້ມີປະສິດທິພາບ ແລະ ປະສິດທິຜົນຕາມກົນໄກເສດຖະກິດຕະຫລາດໃນແຕ່ລະໄລຍະ.

11. ທ້າວຄໍາແສງ, ປະຊາຊົນບ້ານຫ້ວຍລ້ອມ, ເມືອງ ງາ, ແຂວງ ອຸດົມໄຊ ສະເໜີບັນຫາການຊົດເຊີຍຜົນກະທົບຈາກໂຄງການກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ ຊຶ່ງຜູ້ທີ່ມາປະເມີນມູນຄ່າເສຍຫາຍ ວ່າຈະຊົດເຊີຍໃນຈໍານວນເງິນ 45 ລ້ານກີບ ໂດຍໄດ້ເຊັນເອກະສານຮັບຮູ້ ແລະ ຕົກລົງກັນແລ້ວ.ແຕ່ໃນເວລາຈ່າຍຕົວຈິງ ຈ່າຍພຽງແຕ່ 15 ລ້ານກີບ. ຜ່ານມາຜູ້ກ່ຽວກໍໄດ້ໄປທວງນໍາຄະນະກໍາມະການ ແຕ່ບໍ່ໄດ້ຮັບການພິຈາລະນາ.ດັ່ງນັ້ນ, ຈຶ່ງສະເໜີມາຍັງພາກສ່ວນກ່ຽວຂ້ອງຕິດຕາມ, ກວດກາຈໍານວນເງິນສ່ວນທີ່ເຫຼືອນັ້ນ ແລະ ໃຫ້ພິຈາລະນາແກ້ໄຂໃຫ້ຖືກຕ້ອງຕາມຂໍ້ມູນຕົວຈິງດ້ວຍ.

ຕອບ: ດ້ານຫລັກການການຊົດເຊີຍຄໍາຕອບຄືກັບຂໍ້ 2. ສໍາລັບທ້າວ ຄໍາແສງ ປະຊາຊົນບ້ານ ຫ້ວຍລ້ອມ, ເມືອງງາ ແຂວງ ອຸດົມໄຊ ແມ່ນຜູ້ກ່ຽວໄດ້ຮັບຜົນກະທົບຈາກໂຄງການກໍ່ສ້າງທາງລົດໄຟ ແທ້, ດິນຂອງຜູ້ກ່ຽວມີ 3 ຕອນຄື: ດິນນາ, ໜອງປາ ແລະ ດິນສວນ. ການເຊັນໜັງສືຢັ້ງຢືນ ແລະ ຈ່າຍຄ່າຊົດເຊີຍໃຫ້ຜູ້ກ່ຽວ ແມ່ນມູນຄ່າ 45,463,000 ກີບ (ສີ່ສິບຫ້າລ້ານ ສີ່ແສນຫົກສິບສາມພັນ ກີບ), ປະຈຸບັນຄະນະຮັບຜິດຊອບຂັ້ນສູນກາງ ພວມກະກຽມໂອນເງິນ ຄ່າຊົດເຊີຍ ງວດ 6 ລວມມູນຄ່າປະມານ 106 ຕື້ກີບ ໃຫ້ຄະນະກໍາມະການໄກ່ເກ່ຍຂັ້ນແຂວງ/ນະຄອນຫລວງເປັນຜູ້ຈັດຕັ້ງການເບີກຈ່າຍໃຫ້ຜູ້ຖືກຜົນກະທົບ ໂດຍຜ່ານທະນາຄານທຸລະກິດ. ຖ້າປະຊາຊົນທ່ານໃດສົນໃຈໃນລາຍລະອຽດ ສະເໜີໃຫ້ເຂົ້າໄປພົບກັບຄະນະກໍາມະການໄກ່ເກ່ຍຂອງແຂວງ ຫລືນະຄອນຫຼວງວຽງຈັນ ຕາມທີ່ສິ່ງກິດຂວາງຂອງໂຄງການທາງລົດໄຟລາວ-ຈີນ ຕັ້ງຢູ່.

12. ປະຊາຊົນບ້ານ ຄອນແກ້ວ, ເມືອງ ຫີນເຫີບ, ແຂວງ ວຽງຈັນ ສະເໜີໃຫ້ປູຢາງເສັ້ນທາງແຕ່ບ້ານ ຫ້ວຍອີເລີດ ຫາຊາຍແດນເມືອງ ສັງທອງ ໃຫ້ສາມາດນໍາໃຊ້ໄດ້ໃນສອງລະດູ. ເນື່ອງຈາກເສັ້ນທາງດັ່ງກ່າວ ເປັນເສັ້ນທາງຍຸດທະສາດນໍາໃຊ້ເຂົ້າວຽກງານ ປ້ອງກັນຊາດ-ປ້ອງກັນ ຄວາມສະຫງົບ. ດັ່ງນັ້ນ, ຈຶ່ງສະເໜີມາຍັງພາກສ່ວນທີ່ກ່ຽວຂ້ອງພິຈາລະນາ ແລະ ແກ້ໄຂດ້ວຍ.

- ຕອບ: ອີງຕາມການລາຍງານຂອງ ພະແນກ ຍທຂ ແຂວງວຽງຈັນ ໃຫ້ຊາບວ່າ:ສໍາລັບເສັ້ນທາງດັ່ງກ່າວນີ້ ເປັນເສັ້ນທາງຫຼວງຂອງແຂວງ ເລກທີ 0125 ມີຈຸດເລີ່ມຕົ້ນແມ່ນແຍກທາງເລກ 13ເໜືອ ບ້ານຫ້ວຍອີເລີດ ໄປຫາບ້ານຫ້ວຍກົ້ວ (ຊາຍແດນເມືອງສັງທອງ) ມີຄວາມຍາວ 23,3 ກິໂລແມັດ ໂດຍແມ່ນບໍລິສັດແກ້ວໂພສີ ກໍ່ສ້າງ ຂົວທາງຈໍາກັດ ເປັນຜູ້ເຊັນສັນຍາຮັບເໝົາກໍ່ສ້າງທາງປູຢາງສອງຊັ້ນ, ເລີ່ມລົງມືກໍ່ສ້າງແຕ່ຕົ້ນ ປີ 2013 ຈົນມາຮອດປະຈຸບັນນີ້ຄວາມຄືບໜ້າຂອງວຽກທັງໝົດປະຕິໄດ້ 79,3% ໃນນີ້ແມ່ນປູຢາງ ຊັ້ນ1 ໄດ້13 ກິໂລແມັດ, ຍັງບໍ່ທັນໄດ້ປູຢາງ 10,3 ກິໂລແມັດ ແຕ່ກໍ່ສາມາດສັນຈອນໄປມາໄດ້ດີທັງສອງລະດູ ຍ້ອນວ່າໃນຊ່ວງໄລຍະການກໍ່ສ້າງນີ້ແມ່ນບໍລິສັດເປັນຜູ້ຮັບຜິດຊອບໃນການບູລະນະສ້ອມແປງເສັ້ນທາງໃຫ້ໄປມາສະດວກ ຈົນກ່ວາການກໍ່ສ້າງທາງປູຢາງສໍາເລັດ. ຖ້າທຽບໃສ່ສັນຍາແລ້ວແມ່ນຊັກຊ້າຫລາຍ ຍ້ອນບໍລິສັດຂາດເຂີນທາງດ້ານການເງິນທຶນຮອນທີ່ຈະມາລົງທຶນໃສ່ການກໍ່ສ້າງໃຫ້ສໍາເລັດ ແລະ ງົບປະມານຂອງລັດໃນການຊໍາລະໃຫ້ບໍລິສັດແຕ່ລະປີກໍ່ມີຈໍາກັດ, ສະນັ້ນ ເພື່ອໃຫ້ໂຄງການປະຕິບັດສໍາເລັດ ພະແນກ ຍທຂ ແຂວງວຽງຈັນ ໄດ້ເປັນເຈົ້າການເຊີນບໍລິສັດຮັບເໝົາມາປະຊຸມປຶກສາຫາລືຊຸກຍູ້ໃຫ້ບໍລິສັດສືບຕໍ່ປະຕິບັດປູຢາງໃຫ້ສໍາເລັດໃນລະດູແລ້ງ 2020 ນີ້.

13. ປະຊາຊົນ ບ້ານນອນແອນ, ເມືອງງາ, ແຂວງ ອຸດົມໄຊ ສະເໜີບັນຫາການຊົດເຊີຍຜົນກະທົບຈາກໂຄງການກໍ່ສ້າງເສັ້ນທາງລົດໄຟລາວ-ຈີນ ຍັງບໍ່ທັນໄດ້ຮັບເງິນຊົດເຊີຍມູນຄ່າທີ່ດິນ ແລະ ເຮືອນຂອງປະຊາຊົນ ປັດຈຸບັນປະຊາຊົນພົບຄວາມເດືອດຮ້ອນ ເພາະລະດູທໍາການຜະລິດແລ້ວ ແຕ່ບໍ່ມີດິນທໍາການຜະລິດ ດັ່ງນັ້ນ, ຈຶ່ງສະເໜີມາຍັງພາກສ່ວນທີ່ກ່ຽວຂ້ອງພິຈາລະນາ ແລະ ມີທິດທາງແກ້ໄຂດ້ວຍ.

➢ ຕອບ: ຄຳຕອບຄືກັບຂໍ້ 2.

14. ປະຊາຊົນບ້ານ ຫ້ວຍນ້ຳເຢັນ, ເມືອງ ນາຊາຍທອງ, ນະຄອນຫຼວງວຽງຈັນ ສະເໜີບັນຫາການຊົດເຊີຍມູນຄ່າທີ່ດິນ ທີ່ຖືກຜົນກະທົບຈາກໂຄງການກໍ່ສ້າງເສັ້ນທາງດ່ວນວຽງຈັນ-ວັງວຽງ.ເຫັນວ່າການຊົດເຊີຍຕໍ່າຫຼາຍ. ຊຶ່ງໂຄງການກໍ່ສ້າງເສັ້ນທາງດ່ວນໄດ້ກຳນົດການຊົດເຊີຍ 50 ກີບ/ຕາແມັດ ສ່ວນການຊົດເຊີຍທາງລົດໄຟລາວ-ຈີນ ແມ່ນ 218 ກີບ/ຕາແມັດ ເຫັນວ່າການຊົດເຊີຍມີຄວາມແຕກຕ່າງກັນຫຼາຍ. ບັນຫາດັ່ງກ່າວໄດ້ສະເໜີບໍລິສັດທີ່ສຳປະທານ ແລະຂະແໜງການທີ່ກ່ຽວຂ້ອງ ຂອງກະຊວງໂຍທາທິການ ແລະຂົນສົ່ງແລ້ວ ແຕ່ບໍ່ໄດ້ຮັບການແກ້ໄຂ.ດັ່ງນັ້ນ, ຈຶ່ງສະເໜີມາຍັງພາກສ່ວນທີ່ກ່ຽວຂ້ອງຕິດຕາມ, ກວດກາ ແລະແກ້ໄຂດ້ວຍ.

➢ ຕອບ: ກ່ຽວກັບການນຳໃຊ້ລາຄາຫົວໜ່ວຍຊົດເຊີຍມູນຄ່າທີ່ດິນ ທີ່ຖືກຜົນກະທົບຈາກການກໍ່ສ້າງທາງດ່ວນ ນະຄອນຫຼວງວຽງຈັນ ຫາ ວັງວຽງ, ຊຶ່ງແລວທາງດ່ວນ ແມ່ນກວມເອົານະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນ ລວມມີ 4 ເມືອງ (ເມືອງນາຊາຍທອງ, ເມືອງໂພນໂຮງ, ເມືອງທຸລະຄົມ ແລະ ເມືອງວັງວຽງ). ສະເພາະຢູ່ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ ລວມມີ 28 ບ້ານ, 602 ຕອນດິນ, ຊຶ່ງການກຳນົດລາຄາຫົວໜ່ວຍໃນການຊົດເຊີຍມູນຄ່າທີ່ດິນ ໃຫ້ຜູ້ທີ່ຖືກຜົນກະທົບຈາກການກໍ່ສ້າງທາງດ່ວນ ນະຄອນຫຼວງວຽງຈັນ ຫາ ວັງວຽງ ແມ່ນປະຕິບັດຕາມ ຂໍ້ຕົກລົງຂອງທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 0526/ຈນວ, ລົງວັນທີ 4/6/2018 ວ່າດ້ວຍການກຳນົດຂອບເຂດ ແລະ ການປະເມີນຫົວໜ່ວຍລາຄາການທົດແທນຄ່າເສຍຫາຍ ໃຫ້ຜູ້ຖືກຜົນກະທົບຈາກໂຄງການກໍ່ສ້າງທາງດ່ວນດັ່ງກ່າວ, ຊຶ່ງລາຄາຊົດເຊີຍໃນແຕ່ລະບ້ານແມ່ນມີຄວາມແຕກຕ່າງກັນ ຕາມການລົງສຳຫຼວດ, ເກັບກຳ ແລະ ຄິດໄລ່ຕົວຈິງ ຂອງຄະນະກຳມະການໄກ່ເກ່ຍຂອງໂຄງການເຊິ່ງປະກອບມີພາກສ່ວນກ່ຽວຂ້ອງຂອງອົງການປົກຄອງທ້ອງຖິ່ນເຂົ້າຮ່ວມ. ສະເພາະຫົວໜ່ວຍລາຄາຄ່າຊົດເຊີຍທີ່ດິນ ທີ່ໄດ້ຮັບຜົນກະທົບ ຢູ່ບ້ານຫ້ວຍນ້ຳເຢັນ, ເມືອງນາຊາຍທອງ ທີ່ໂຄງການໄດ້ຈັດຕັ້ງປະຕິບັດຜ່ານມາ ແມ່ນແຍກເປັນສາມປະເພດຕອນດິນຄື:

1). ຕອນດິນຕິດກັບເສັ້ນທາງເຊື່ອມຕໍ່ (ທາງເຊື່ອມຕໍ່ກັບເສັ້ນທາງສາຍຫຼັກ) ຊົດເຊີຍໃນລາຄາ 50.000 ກີບ/ຕາແມັດ;

2). ຕອນດິນຕິດກັບເສັ້ນທາງສາຍແຈກ (ທາງຮ່ອມ) ຊົດເຊີຍໃນລາຄາ 40.000 ກີບ/ຕາແມັດ;

3). ຕອນດິນຕິດກັບທາງທຽວເດີນ (ບໍ່ມີເສັ້ນທາງ) ຊົດເຊີຍໃນລາຄາ 25.000 ກີບ/ຕາແມັດ.

15. ປະຊາຊົນເມືອງ ວັງວຽງ, ແຂວງ ວຽງຈັນ ສະເໜີບັນຫາການຊົດເຊີຍຜົນກະທົບຈາກໂຄງການກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ. ຊຶ່ງໃນ ເດືອນພະຈິກ 2018 ຜ່ານມາໄດ້ມີພາກສ່ວນກ່ຽວຂ້ອງລົງໄປລຸ່ອງ ແລະ ເກັບເອົາໃບຕາດິນ ຂອງປະຊາຊົນ ພ້ອມທັງເວົ້າວ່າ: ພາຍໃນຕົ້ນປີ 2019 ຈະໄດ້ຮັບການຊົດເຊີຍ. ແຕ່ປັດຈຸບັນປະຊາຊົນຍັງບໍ່ທັນໄດ້ຮັບການຊົດເຊີຍໃດໆ. ດັ່ງນັ້ນ, ຈຶ່ງສະເໜີມາຍັງພາກສ່ວນກ່ຽວຂ້ອງລົງຕິດຕາມ, ກວດກາ ແລະ ຊຸກຍູ້ເພື່ອແກ້ໄຂບັນຫາດັ່ງກ່າວດ້ວຍ.

➢ ຕອບ: ຄຳຕອບຄືກັບຂໍ້ 2.

16. ປະຊາຊົນເມືອງໄຊ, ແຂວງ ອຸດົມໄຊ ສະເໜີບັນຫາການກໍ່ສ້າງເສັ້ນທາງແຕ່ 4 ແຍກໄຟແດງ ຄືວລົດສາຍໃຕ້ເກົ່າ ຫາ 3 ແຍກໜອງບົກ ຊຶ່ງມີໄລຍະທາງພຽງແຕ່ 9 ກິໂລແມັດ ແຕ່ໃຊ້ເວລາການກໍ່ສ້າງມາແລ້ວ 4-5 ປີ ກໍຍັງບໍ່ທັນສຳເລັດ ແລະ ການກໍ່ສ້າງເສັ້ນທາງສາຍອື່ນໆ ກໍມີລັກສະນະດຽວກັນນີ້. ດັ່ງນັ້ນ, ຈຶ່ງສະເໜີມາຍັງພາກສ່ວນທີ່ກ່ຽວຂ້ອງກວດກາບັນຫານີ້ດ້ວຍ.

➢ ຕອບ: ຄຳຕອບຄືກັບຂໍ້ 5.

ດັ່ງນັ້ນ, ຈຶ່ງລາຍງານມາຍັງທ່ານ ເພື່ອຊາບຕາມທາງຄວນດ້ວຍ.

ລັດຖະມົນຕີ

ສັນຕິສຸກ ສິມມາລາວົງ

ບ່ອນນຳສົ່ງ:

- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ.